**ມິຊຊາອາທິດທີ 33 ການົດທຳມະດາປີ A**

**ວັນທີ 15 ພະຈິກ 2020**



**ພຣະວໍລະສານໂດຍນັກບຸນມັດເທວ 25, 14-30**

ໃນເວລານັ້ນ, ພຣະເຢຊູເຈົ້າຊົງກ່າວເຖິງເລື່ອງການສະເດັດກັບມາໃໝ່ຂອງພຣະອົງໃຫ້ພວກສາວົກຟັງເປັນຄວາມປຽບທຽບວ່າ: "ກໍເປັນດັ່ງເລື່ອງຄົນຜູ້ໜຶ່ງ, ກ່ອນຈະອອກເດີນທາງໄປເມືອງໄກລາວໄດ້ເອີ້ນພວກຄົນໃຊ້ເຂົ້າມາ ແລະມອບຊັບໃຫ້ພວກເຂົາ. ຄົນໃຊ້ຜູ້ທີໜຶ່ງໄດ້ຫ້າຫລຽນ, ຜູ້ທີສອງໄດ້ສອງຫລຽນ ແລະຜູ້ທີສາມໄດ້ໜຶ່ງຫລຽນຕາມຄວາມສາມາດຂອງແຕ່ລະຄົນ; ແລ້ວຄົນຜູ້ນັ້ນກໍອອກເດີນທາງໄປ. ທັນທີ, ຜູ້ທີ່ໄດ້ຮັບຫ້າຫລຽນກໍເອົາເງິນຈຳນວນນັ້ນໄປທຳປະໂຫຍດ ແລະກໍໄດ້ກຳໄລມາຕື່ມອີກຫ້າຫລຽນ. ດັ່ງດຽວກັນ, ຜູ້ທີ່ໄດ້ຮັບສອງຫລຽນກໍຫາກຳໄລມາຕື່ມອີກສອງຫລຽນ. ສ່ວນຜູ້ທີ່ໄດ້ຮັບແຕ່ໜຶ່ງຫລຽນ, ເຂົາໄດ້ໄປຂຸດດິນແລ້ວເອົາເງິນຂອງນາຍໄປຝັງໄວ້. ເຫິງນານຕໍ່ມາ, ນາຍຜູ້ນັ້ນໄດ້ກັບມາແລະໄດ້ເອີ້ນພວກຄົນໃຊ້ຂອງຕົນເຂົ້າມາລາຍງານ.

ຜູ້ໄດ້ຮັບຫ້າຫລຽນເຂົ້າມາແລະໄດ້ນຳເອົາເງິນກຳໄລຫ້າຫລຽນນັ້ນມາສະເໜີນາຍເວົ້າວ່າ: "ທ່ານໄດ້ມອບໃຫ້ຂ້ານ້ອຍຫ້າຫລຽນ. ນີ້ແຫລະ, ຂ້ານ້ອຍໄດ້ກຳໄລອີກຫ້າຫລຽນ". ນາຍຈຶ່ງເວົ້າກັບເຂົາວ່າ: "ດີແລ້ວ, ຄົນໃຊ້ຜູ້ດີແລະສັດຊື່". ເຈົ້າໄດ້ສັດຊື່ໃນສິ່ງເລັກນ້ອຍ, ເຮົາຈະແຕ່ງຕັ້ງເຈົ້າໃຫ້ຄວບຄຸມໃນສິ່ງຫລວງຫລາຍ. ເຊີນມາຮ່ວມຍິນດີກັບນາຍຂອງເຈົ້າ."

ຕໍ່ມາຜູ້ໄດ້ຮັບສອງຫລຽນກໍເຂົ້າມາເວົ້າວ່າ: "ທ່ານໄດ້ມອບໃຫ້ຂ້ານ້ອຍສອງຫລຽນ. ນີ້ແຫລະ, ຂ້ານ້ອຍໄດ້ກຳໄລມາອີກສອງຫລຽນ". ນາຍຈຶ່ງເວົ້າວ່າ: "ດີແລ້ວ, ຄົນໃຊ້ຜູ້ດີແລະສັດຊື່". ເຈົ້າໄດ້ສັດຊື່ໃນສິ່ງເລັກນ້ອຍ, ເຮົາຈະແຕ່ງຕັ້ງເຈົ້າໃຫ້ຄວບຄຸມສິ່ງໃຫຍ່ຫລວງ. ເຊີນມາຮ່ວມຍິນດີກັບນາຍຂອງເຈົ້າ."

ທີ່ສຸດ, ຜູ້ໄດ້ຮັບແຕ່ໜຶ່ງຫລຽນກໍເຂົ້າມາເວົ້າວ່າ: "ຂ້ານ້ອຍຮູ້ວ່າທ່ານເປັນຄົນເຄັ່ງຄັດ: ທ່ານກ່ຽວເຂົ້າບ່ອນທີ່ທ່ານບໍ່ໄດ້ຫວ່ານ, ແລະຮິບໂຮມບ່ອນທີ່ທ່ານບໍ່ໄດ້ແຈກຈ່າຍ. ເພາະສະນັ້ນຂ້ານ້ອຍຢ້ານຫລາຍ, ຂ້ານ້ອຍຈຶ່ງໄດ້ເອົາເງິນຂອງທ່ານ ໄປຝັງດິນໄວ້. ນີ້ແຫລະເງິນຂອງທ່ານໃຫ້ທ່ານເອົາຄືນເສຍ". ແຕ່ນາຍໄດ້ຕອບເຂົາວ່າ: "ຄົນໃຊ້ຜູ້ຊົ່ວຊ້າແລະກຽດຄ້ານ ! ເຈົ້າຮູ້ແລ້ວວ່າ, ເຮົາກ່ຽວເຂົ້າບ່ອນທີ່ເຮົາບໍ່ໄດ້ຫວ່ານແລະຮິບໂຮມບ່ອນທີ່ເຮົາບໍ່ໄດ້ແຈກຈ່າຍ. ດັ່ງນັ້ນ, ເຈົ້າກໍຄວນເອົາເງິນຂອງເຮົາໄປຝາກທະນາຄານໄວ້. ແລະເວ-ລາເຮົາກັບມາ, ເຮົາກໍຈະຖອນເອົາຊັບຂອງເຮົາພ້ອມກັບດອກເບ້ຍ. ຈົ່ງຢຶດເອົາເງິນຫລຽນຂອງມັນໄປໃຫ້ຜູ້ທີ່ມີສິບຫລຽນແລ້ວ. ຍ້ອນວ່າ, ຜູ້ທີ່ມີແລ້ວຈະໄດ້ຮັບຕື່ມອີກແລະຈະມີຫລາຍຂຶ້ນ. ສ່ວນຜູ້ທີ່ບໍ່ມີ ແມ່ນວ່າ ອັນທີ່ມີແລ້ວກໍຈະຖືກຢຶດເອົາໄປຊ້ຳ. ສ່ວນຄົນໃຊ້ທີ່ບໍ່ມີປະ-ໂຫຍດນີ້, ຈົ່ງເອົາມັນໄປຖິ້ມທາງນອກບ່ອນມືດເສຍູ່ທີ່ນັ້ນຈະມີແຕ່ສຽງຮ້ອງໄຫ້ແລະກັດແຂ້ວ".

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 25, 14-30**

ວາຈາພຣະເຈົ້າໃນວັນອາທິດນີ້ກ່າວເຖິງການຕື່ນເຝົ້າແລະຕຽມພ້ອມຢູ່ສະເໝີ. ຍ້ອນພວກເຮົາບໍ່ຮູ້ຈັກວັນແລະເວລາທີ່ພຣະເຢຊູເຈົ້າຈະສະເດັດກັບມາອີກຄັ້ງ.

ໃນບົດອ່ານທີໜຶ່ງຈາກໜັງສືສຸພາສິດ, ຜູ້ຂຽນໜັງສືສຸພາສິດນີ້ໄດ້ບັນລະຍາຍເຖິງຄວາມຊື່ສັດໂດຍໃຊ້ຮູບພາບຂອງຜູ້ເປັນພັນລະຍາທີ່ດີ. ພັນລະຍາທີ່ດີນີ້ເປັນຜູ້ຊື່ສັດຕໍ່ສາມີແລະຕໍ່ວຽກງານທີ່ຕົນໄດ້ຮັບມອບໝາຍ. ທຸກຄົນຈະຍ້ອງຍໍສັນລະເສີນຜູ້ເປັນພັນລະຍາທີ່ດີນີ້ຍ້ອນເຂົາໄດ້ຊື່ສັດຕໍ່ສາມີຂອງຕົນແລະຕໍ່ພຣະເຈົ້າ.

ສ່ວນໃນບົດອ່ານທີສອງ, ນັກບຸນເປົາໂລໄດ້ຕັກເຕືອນຊາວເທຊາໂລນິກໃຫ້ຕື່ນເຝົ້າແລະລະວັງຕົວຢູ່ສະເໝີ. ຍ້ອນພວກເຂົາບໍ່ຮູ້ຈັກວັນແລະເວລາທີ່ພຣະເຢຊູເຈົ້າຈະສະເດັດກັບມາອີກຄັ້ງ.

ໃນພຣະວໍລະສານ, ພຣະເຢຊູເຈົ້າກໍກ່າວເຖິງວັນທີ່ພຣະອົງຈະສະເດັດກັບມາອີກຄັ້ງໂດຍໃຊ້ຄວາມປຽບທຽບເລື່ອງນາຍທີ່ອອກເດີນທາງໄກແລະໄດ້ມອບຊັບສິນໃຫ້ຄົນໃຊ້ພວກເຂົາຕາມແຕ່ຄວາມສາມາດຂອງແຕ່ລະຄົນ. ເມື່ອນາຍກັບມາຈາກຕ່າງປະເທດ, ເຂົາກໍເອີ້ນຄົນໃຊ້ທັງສາມອອກມາແລະຖາມເຖິງວຽກງານທີ່ຄົນໃຊ້ເຫລົ່ານັ້ນໄດ້ກະທຳ. ຄົນໃຊ້ທີສາມທີ່ຖືກນາຍຕັດສິນວ່າເປັນຄົນກຽດຄ້ານແລະຊົ່ວຊ້ານັ້ນຍ້ອນເຂົາຄິດວ່ານາຍຂອງຕົນຍັງອີກນານຈຶ່ງຈະກັບມາ. ແທນທີ່ເຂົາຈະທຳໃຫ້ຊັບສິນທີ່ນາຍມອບໃຫ້ເຂົາເກີດດອກອອກຜົນ. ເຂົາພັດເອົາຊັບນັ້ນໄປຝັງໄວ້ໃນດິນ. ໝາຍວ່າເຂົາບໍ່ຫົວຊານຳໜ້າທີ່ຊຶ່ງນາຍໄດ້ມອບໃຫ້ເຂົາ. ແນ່ນອນ, ຜົນທີ່ຕາມມາກໍຄືນາຍໄດ້ຍຶດເອົາສິ່ງທີ່ເຂົາມີໄປໃຫ້ຄົນອື່ນແລະໂຍນເຂົາເຂົ້າໃນບ່ອນທີ່ມີແຕ່ສຽງຮ້ອງໄຫ້ແລະກັດແຂ້ວ.

ຮູບພາບຂອງຄົນໃຊ້ກຽດຄ້ານແລະຊົ່ວຊ້ານີ້ອາດຈະແມ່ນພວກເຮົາແຕ່ລະຄົນກໍເປັນໄດ້. ຍ້ອນຫລາຍຄັ້ງພວກເຮົາໄດ້ຖືເບົາຄຳສັ່ງສອນແລະພຣະທຳບັນຍັດຂອງພຣະເຈົ້າ. ແທນທີ່ພວກເຮົາຈະທຳໜ້າທີ່ຊຶ່ງພຣະເຈົ້າມອບໝາຍໃຫ້ພວກເຮົາຄືການເປັນກຣິສຕັງທີ່ດີ, ເປັນຜູ້ນຳທີ່ດີ, ເປັນພໍ່ເປັນແມ່ທີ່ດີ, ເປັນລູກທີ່ດີ, ເປັນນັກສຶກສາທີ່ດີ, ພວກເຮົາພັດເປັນຄົນເອົາແຕ່ໃຈຕົວເອງ, ແລະກະທຳຕາມໃຈຕົວເອງໄປໃນທາງທີ່ຜິດ. ແນ່ນອນ, ວັນທີ່ພຣະເຢຊູເຈົ້າຈະກັບມາ ພຣະອົງກໍຈະຕັດສິນພວກເຮົາເໝືອນກັບພຣະອົງໄດ້ຕັດສິນຄົນໃຊ້ຊົ່ວຊ້າແລະກຽດຄ້ານຄືພຣະອົງຈະໂຍນພວກເຮົາເຂົ້າໃນບ່ອນທີ່ມີແຕ່ຄວາມມືດອັນແມ່ນໄຟນະລົກນັ້ນເອງ.

**ພາວະນາ**

ໂອພຣະເຢຊູເຈົ້າ ໂຜດຊ່ວຍລູກໃຫ້ຮູ້ຈັກຜັນປ່ຽນຊີວິດການກະທຳທີ່ບໍ່ສອດຄ່ອງກັບນ້ຳພຣະໄທແລະຄຳສັ່ງສອນຂອງພຣະອົງ. ເພື່ອລູກຈະໄດ້ເປັນຄົນໃຊ້ທີ່ດີແລະສັດຊື່ຂອງພຣະອົງຕະຫລອດຊີວິດຂອງລູກດ້ວຍເທີ້ນ. ອາແມນ

ຄຸນພໍ່ ອົງຕວນ ກຽດຕິສັກ